**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ

ເລກທີ່.......91......../ນຍ

*ນະຄອນຫຼວງວຽງຈັນ, ວັນທີ* 30.06-2004

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງ ອົງການທ່ອງທ່ຽວແຫ່ງຊາດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມ ການຕົກລົງເຫັນດີຂອງ ກອງປະຊຸມ ລັດຖະບານ ຄັ້ງວັນທີ 15-16 ມີນາ 2004
- ອີງຕາມ ການສະເໜີຂອງ ປະທານອົງການທ່ອງທ່ຽວແຫ່ງຊາດ.

## ນາຍົກລັດຖະມົນຕີອອກດຳລັດ

### ໝວດທີ I
### ທີ່ຕັ້ງ ແລະ ພາລະບົດບາດ

**ມາດຕາ 1. ທີ່ຕັ້ງ ແລະ ພາລະບົດບາດ**

ອົງການທ່ອງທ່ຽວແຫ່ງຊາດ ຂຽນເປັນອັກສອນຫຍໍ້ວ່າ " ອ ທ ຊ " ແລະ ຂຽນເປັນພາສາອັງກິດວ່າ " LAO NATIONAL TOURISM ADMINISTRATION " ແມ່ນອົງການຈັດຕັ້ງລັດຂັ້ນສູນກາງ ສັງກັດໃນໂຄງປະກອບກົງຈັກການຈັດຕັ້ງ ຂອງ ສຳນັກງານນາຍົກລັດຖະມົນຕີ, ມີຖານະເທົ່າກັບທະບວງ ແລະ ມີພາລະບົດບາດຄຸ້ມຄອງລັດໃນຂະແໜງການທ່ອງທ່ຽວ ແລະ ໂຮງແຮມໃນຂອບເຂດທົ່ວປະເທດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 2. ໜ້າທີ່**

ອົງການທ່ອງທ່ຽວແຫ່ງຊາດ ມີໜ້າທີ່ຕົ້ນຕໍດັ່ງລຸ່ມນີ້:

2.1 ຄົ້ນຄ້ວາຫັນເອົາແນວທາງແຜນນະໂຍບາຍຂອງພັກ - ລັດຖະບານເປັນແຜນຍຸດທະສາດ, ແຜນການ ແລະ ໂຄງການລະອຽດກ່ຽວກັບການພັດທະນາການທ່ອງທ່ຽວ ແລະ ໂຮງ ແຮມໃນຂອບເຂດທົ່ວປະເທດ ເພື່ອນຳສະເໜີຕໍ່ລັດຖະບານພິຈາລະນາອະນຸມັດ ແລະ ຊີ້ນຳກວດກາການຈັດຕັ້ງປະຕິບັດບັນດາຍຸດທະສາດ, ແຜນການ ແລະ ໂຄງການດັ່ງກ່າວໃຫ້ບັນລຸຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍ;

2.2 ສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອກຳນົດ, ວາງແຜນ, ພັດທະນາ ແລະ ບູລະນະແຫຼ່ງທ່ອງທ່ຽວທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດໃນຂອບເຂດ ທົ່ວປະເທດ;

2.3 ຄົ້ນຄ້ວາກຳນົດລະບຽບການ, ນະໂຍບາຍ ແລະ ຮ່າງກົດໝາຍ ກ່ຽວກັບການຄຸ້ມຄອງ, ພັດທະນາການທ່ອງທ່ຽວ ແລະ ໂຮງແຮມ ເພື່ອນຳສະເໜີລັດຖະບານ ແລະ ສະພາແຫ່ງຊາດຮັບຮອງ;

2.4 ຊຸກຍູ້, ຕິດຕາມກວດກາ ການປະຕິບັດຂໍ້ກຳນົດ, ລະບຽບການ, ກົດໝາຍໃນຂະແໜງການທ່ອງທ່ຽວເປັນປົກກະຕິ;

2.5 ອະນຸຍາດການດຳເນີນທຸລະກິດທ່ອງທ່ຽວ ແລະ ໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ສະຖານທີ່ພັກຜ່ອນ ຕາມການແບ່ງຂັ້ນຄຸ້ມຄອງຂະແໜງການ ( ລະບຽບການແບ່ງຂັ້ນຄຸ້ມຄອງຈະມີຕ່າງຫາກ );

2.6 ຕັກເຕືອນ, ປັບໃໝ, ສັ່ງໂຈະ ຫຼື ຍຸບເລີກການຈັດຕັ້ງ ແລະ ການເຄື່ອນໄຫວທຸລະກິດທ່ອງທ່ຽວ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ສະຖານທີ່ທ່ອງທ່ຽວ, ສະຖານທີ່ພັກຜ່ອນເມື່ອເຫັນວ່າມີການກະທຳຜິດລະເມີດກົດໝາຍ ຫຼື ຂັດກັບລະບຽບການຂອງອົງການທ່ອງທ່ຽວແຫ່ງຊາດ ວາງອອກ;

2.7 ດຳເນີນການໂຄສະນາເພື່ອສົ່ງເສີມການທ່ອງທ່ຽວພາຍໃນ ແລະ ສາກົນຢ່າງກ້ວາງຂວາງ, ກຳນົດນະໂຍບາຍ, ມາດຕະການ ແລະ ຈັດຫາຕະຫຼາດໃນແຕ່ລະໄລຍະ ໃຫ້ນັບມື້ເປີດກ້ວາງ;

2.8 ຄົ້ນຄ້ວາປະກອບຄຳເຫັນທາງດ້ານວິຊາການກ່ຽວກັບໂຄງການລົງທຶນພາຍໃນ ແລະຕ່າງປະເທດດ້ານການທ່ອງທ່ຽວ ແລະ ໂຮງແຮມ, ເຮືອນພັກ, ຮ້ານອາຫານ, ສະຖານທີ່ ທ່ອງທ່ຽວ ແລະ ສະຖານທີ່ພັກຜ່ອນ;

2.9 ກຳນົດມາດຕະຖານ ແລະ ຈັດລະດັບຂັ້ນ ຫຼື ປະເພດຂອງໂຮງແຮມ, ເຮືອນພັກ, ຮ້ານອາຫານໃຫ້ຖືກຕ້ອງຕາມຫຼັກວິຊາການ ແລະ ມາດຕະຖານສາກົນ;

2.10 ຈັດຕັ້ງຝຶກອົບຮົມບຸກຄະລາກອນຂອງພາກລັດ ແລະ ພາກເອກະຊົນທີ່ເຄື່ອນໄຫວ ໃນຂະແໜງການທ່ອງທ່ຽວ, ໂຮງແຮມ ແລະ ຮ້ານອາຫານໃຫ້ມີຄວາມສາມາດບໍລິການແຂກ ໃນລະດັບມາດຕະຖານສາກົນ;

2.11 ຊີ້ນຳ, ຂະແໜງການສາຍຕັ້ງຂອງຕົນປະຈຳທ້ອງຖິ່ນທາງດ້ານວິຊາສະເພາະ, ລວມທັງບັນຫາການຄຸ້ມຄອງບັນດາສະມາຄົມ ແລະ ຫົວໜ່ວຍທຸລະກິດການທ່ອງທ່ຽວ, ສະມາຄົມ ແລະ ຫົວໜ່ວຍທຸລະ

ກິດໂຮງແຮມ ແລະ ເຮືອນພັກ, ສະມາຄົມ ແລະ ຫົວໜ່ວຍທຸລະກິດຮ້ານອາຫານ ທັງພາກລັດ ແລະ ພາກເອກະຊົນໃຫ້ເຄື່ອນໄຫວຢ່າງມີປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບກົດໝາຍ ທີ່ລັດວາງອອກ;

2.12 ປັບປຸງບູລະນະສູນຂໍ້ມູນຂ່າວສານການທ່ອງທ່ຽວໃຫ້ທັນສະໄໝ ທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ ແນໃສ່ເພີ່ມທະວີການໂຄສະນາ ແລະ ປຸກລະດົມຂົນຂວາຍການທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ຢ່າງແຂງແຮງ ແລະ ກ້ວາງຂວາງ;

2.13 ປັບປຸງລະບົບການຈັດຕັ້ງຂອງຂະແໜງການທ່ອງທ່ຽວ ໃຫ້ມີຄວາມໜັກແໜ້ນ, ຄຸ້ມຄອງ ແລະ ນຳໃຊ້ພະນັກງານ-ລັດຖະກອນໂດຍຮັບປະກັນທາງດ້ານປະລິມານ, ຄຸນນະພາບ ແລະ ມີປະສິດທິຜົນ ແນໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ;

2.14 ປະສານສົມທົບກັບທຸກພາກສ່ວນກ່ຽວຂ້ອງ ( ກະຊວງປ້ອງກັນຄວາມສະຫງົບ, ກະຊວງ ການຕ່າງປະເທດ ) ໃນການເອື້ອອຳນວຍການເຂົ້າ-ອອກ, ອອກ-ເຂົ້າປະເທດ ຢູ່ດ່ານສາກົນໃຫ້ມີຄວາມສະດວກ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພ ຂອງນັກທ່ອງທ່ຽວ;

2.15 ສົມທົບກັບຂະແໜງຖະແຫຼງຂ່າວ ແລະ ວັດທະນະທຳ ແລະ ຂະແໜງປ້ອງກັນຄວາມສະຫງົບ ໃນການຄຸ້ມຄອງກວດກາສະຖານບັນເທີງຕ່າງໆ ເພື່ອໃຫ້ເຄື່ອນໄຫວຖືກຕ້ອງຕາມກົດໝາຍ ແລະ ລະບຽບການກຳນົດໄວ້;

2.16 ຄຸ້ມຄອງກອງທຶນແຫ່ງຊາດ ເພື່ອສົ່ງເສີມການທ່ອງທ່ຽວຢ່າງໜັກແໜ້ນ ແລະ ມີປະສິດ ທິຜົນ;

2.17 ປະສານສົມທົບກັບສະພາສົ່ງເສີມການທ່ອງທ່ຽວລະດັບຊາດ ເພື່ອສົ່ງເສີມການພັດທະນາການທ່ອງທ່ຽວໃຫ້ເຂັ້ມແຂງ ( ຈະມີລະບຽບອອກຕ່າງຫາກ );

2.18 ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນດ້ານການທ່ອງທ່ຽວຕາມການອະນຸມັດຂອງລັດຖະບານ, ໂດຍສະເພາະແມ່ນການຮ່ວມມືກັບບັນດາປະເທດໃກ້ຄຽງ ແລະ ປະເທດໃນກຸ່ມອາຊຽນ.

**ມາດຕາ 3. ຂອບເຂດສິດ**

ອົງການທ່ອງທ່ຽວແຫ່ງຊາດມີຂອບເຂດສິດດັ່ງນີ້:

3.1 ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການກ່ຽວກັບການຈັດຕັ້ງປະຕິບັດ ບັນດາກົດໝາຍ, ມະຕິ, ຄຳສັ່ງ ແລະ ນິຕິກຳຕ່າງໆ ຂອງຂັ້ນເທິງ ທີ່ກ່ຽວພັນກັບວຽກງານທ່ອງທ່ຽວ ແລະ ໂຮງແຮມ;

3.2 ແຕ່ງຕັ້ງ, ເລື່ອນຊັ້ນ, ຍົກຍ້າຍ, ປົດຕຳແໜ່ງ, ຍ້ອງຍໍ, ລົງວິໄນ ແລະ ປະຕິບັດນະໂຍບາຍອື່ນໆ ຕໍ່ບັນດາພະນັກງານ - ລັດຖະກອນທີ່ສັງກັດຢູ່ພາຍໃຕ້ການຄຸ້ມຄອງຂອງຕົນຕາມກົດໝາຍ ແລະ ລະບຽບລັດຖະກອນທີ່ກຳນົດໄວ້;

3.3 ວິດການປະຕິບັດ, ລົບລ້າງ ຫຼື ຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຂອງອົງການຈັດຕັ້ງຂັ້ນລຸ່ມທີ່ຂຶ້ນກັບຂະແໜງການຂອງຕົນ ແລະ ມີສິດສະເໜີດັດແປງ, ວິດການປະຕິບັດ, ລົບລ້າງ ຫຼື ຍົກເລີກນິຕິກຳຂອງຂະແໜງການອື່ນ ຫຼື ຂອງອົງການປົກຄອງທ້ອງຖິ່ນທີ່ຂັດກັບລະບຽບຫຼັກການຂອງຂະແໜງການທ່ອງທ່ຽວ ຫຼື ຂັດກັບລະບຽບກົດໝາຍ;

3.4 ເຊັນສັນຍາ, ອະນຸສັນຍາ ຫຼື ບົດບັນທຶກການຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ; ຈັດຕັ້ງຫຼື ເຂົ້າຮ່ວມກອງປະຊຸມລະດັບສາກົນໃນຂະແໜງການທ່ອງທ່ຽວ ແລະ ໂຮງແຮມ ຕາມການອະນຸມັດ ຂອງລັດຖະບານ;

3.5 ຈັດຕັ້ງ ຫຼື ເຂົ້າຮ່ວມກິດຈະກຳທ່ອງທ່ຽວຕ່າງໆ ທັງຢູ່ພາຍໃນ ແລະ ຕ່າງປະເທດ;

3.6 ຄຸ້ມຄອງ, ນຳໃຊ້ງົບປະມານ ແລະ ກອງທຶນແຫ່ງຊາດ ເພື່ອສົ່ງເສີມການທ່ອງທ່ຽວ ແລະ ໂຮງແຮມ ຢ່າງມີແຜນການ ແລະ ມີປະສິດທິຜົນ, ຖືກຕ້ອງຕາມລະບຽບກົດໝາຍ ( ກອງທຶນແຫ່ງຊາດ ເພື່ອສົ່ງເສີມການທ່ອງທ່ຽວ ແມ່ນໄດ້ມາຈາກການເສຍເງິນບຳລຸງ ຂອງບັນດາຫົວໜ່ວຍທຸລະກິດທີ່ບໍລິການທ່ອງທ່ຽວ, ໂຮງແຮມ, ຣີສອດ, ເຮືອນພັກທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ອົງການທ່ອງທ່ຽວແຫ່ງຊາດ ແລະ ຈະມີຂໍ້ກຳນົດສະເພາະກ່ຽວກັບກອງທຶນດັ່ງກ່າວ );

3.7 ຮຽກປະຊຸມພະນັກງານນຳພາ ແລະ ຄຸ້ມຄອງຈາກບັນດາພາກສ່ວນ, ຂະແໜງການທີ່ກ່ຽວຂ້ອງທັງມະຫາພາກ ແລະ ພາກທຸລະກິດ ເພື່ອປຶກສາຫາລືບັນຫາຕ່າງໆ ທີ່ມີການພົວພັນເຖິງວຽກງານທ່ອງທ່ຽວ ແລະ ອຸດສະຫະກຳທ່ອງທ່ຽວ;

3.8 ຕິດຕາມ ແລະ ຊຸກຍູ້ບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ, ບັນດາການຈັດຕັ້ງ ແລະ ບຸກຄົນ ( ນັບທັງຊາວຕ່າງດ້າວ ແລະ ຕ່າງປະເທດທີ່ເຄື່ອນໄຫວວຽກງານຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ) ໃນການປະຕິບັດບັນດາຂໍ້ກຳນົດ, ກົດໝາຍ ແລະ ລະບຽບການຕ່າງໆ ກ່ຽວກັບວຽກງານທ່ອງທ່ຽວທີ່ລັດປະກາດໃຊ້;

3.9 ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ລັດຖະບານມອບໝາຍໃຫ້ສະເພາະ ແລະ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 4. ໂຄງປະກອບບຸກຄະລາກອນ**

**4.1** ອົງການທ່ອງທ່ຽວແຫ່ງຊາດ ປະກອບດ້ວຍປະທານ 1 ທ່ານ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ. ປະທານເປັນຜູ້ຮັບຜິດຊອບຕໍ່ນາຍົກລັດຖະມົນຕີ ກ່ຽວກັບຜົນສຳເລັດ, ຂໍ້ບົກຜ່ອງຕ່າງໆ ໃນການຜັນຂະຫຍາຍຈັດຕັ້ງປະຕິບັດນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ໃນຂົງເຂດວຽກງານທ່ອງທ່ຽວ ແລະ ໂຮງແຮມ ແລະ ການປະຕິບັດໜ້າທີ່, ຂອບເຂດສິດ ຂອງ ອົງການທ່ອງທ່ຽວແຫ່ງຊາດ ຕາມທີ່ໄດ້ ກຳນົດຢູ່ໃນມາດຕາ 2 ແລະ 3 ຂອງດຳລັດສະບັບນີ້;

**4.2** ອົງການທ່ອງທ່ຽວແຫ່ງຊາດມີຮອງປະທານຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ. ຮອງປະທານມີພາລະບົດບາດເປັນຜູ້ຊ່ວຍວຽກປະທານ ໃນການນຳພາ ແລະ ອຳນວຍຄວບຄຸມວຽກງານລວມຂອງອົງການ; ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານ. ເມື່ອປະທານຕິດຂັດແມ່ນຮອງປະທານຜູ້ທີ່ໄດ້ຮັບມອບໝາຍ ເປັນຜູ້ວ່າການແທນ;

4.3 ອົງການທ່ອງທ່ຽວແຫ່ງຊາດປະກອບມີ ຫົວໜ້າຫ້ອງການ, ຫົວໜ້າກົມຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ ແລະ ປົດຕຳແໜ່ງຈາກນາຍົກລັດຖະມົນຕີ ຕາມການສະເໜີຂອງປະທານອົງການທ່ອງທ່ຽວແຫ່ງຊາດ, ນອກນັ້ນຍັງປະກອບມີຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຫົວໜ້າສູນ, ຮອງຫົວໜ້າສູນ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ພະນັກງານວິຊາການຊ່ວຍວຽກຈຳນວນໜຶ່ງຊຶ່ງຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍລັດຖະມົນຕີປະຈຳ ສຳນັກງານນາຍົກລັດຖະມົນຕີ.

**ມາດຕາ 5. ໂຄງປະກອບກົງຈັກ**

5.1 ຢູ່ຂັ້ນສູນກາງ ປະກອບມີ:

- ຫ້ອງການ;
- ກົມແຜນການ ແລະ ການຮ່ວມມື;
- ກົມຄຸ້ມຄອງທຸລະກິດທ່ອງທ່ຽວ ແລະ ໂຮງແຮມ;
- ກົມໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວ;
- ສູນຝຶກອົບຮົມວິຊາການທ່ອງທ່ຽວ ( ຫົວໜ້າສູນມີຕຳແໜ່ງບໍລິຫານປະເພດ 6 ຕາມດຳລັດ 173/ນຍ, ລົງວັນທີ 11 ພະຈິກ 1993 ).

5.2 ຢູ່ຂັ້ນທ້ອງຖິ່ນມີຫ້ອງການທ່ອງທ່ຽວປະຈຳແຂວງ, ນະຄອນ ແລະ ເຂດພິເສດ ( ຫົວໜ້າຫ້ອງການດັ່ງກ່າວນີ້ ມີຕຳແໜ່ງບໍລິຫານປະເພດ 7 ຕາມດຳລັດ 173/ນຍ, ລົງວັນທີ 11 ພະຈິກ 1993 );

ຫ້ອງການທ່ອງທ່ຽວປະຈຳທ້ອງຖິ່ນ ຢູ່ພາຍໃຕ້ການຊີ້ນຳ - ນຳພາຂອງ ອົງການທ່ອງທ່ຽວແຫ່ງຊາດທາງດ້ານວິຊາການ. ນອກນີ້, ຢູ່ຂັ້ນເມືອງມີໜ່ວຍງານທ່ອງທ່ຽວປະຈຳເມືອງຕ່າງໆ ທີ່ເຫັນວ່າມີການທ່ອງທ່ຽວຂະຫຍາຍຕົວ;

5.3 ສຳລັບຢູ່ຕ່າງປະເທດ, ກໍລະນີມີຄວາມຈຳເປັນ ອະນຸຍາດໃຫ້ມີຜູ້ຕາງໜ້າອົງການທ່ອງທ່ຽວແຫ່ງຊາດ ຊຶ່ງສັງກັດຢູ່ການຈັດຕັ້ງຂອງສະຖານທູດ ຫຼື ກົງສຸນໃຫຍ່ປະຈຳປະເທດນັ້ນ ບົນພື້ນຖານການຕົກລົງຂອງນາຍົກລັດຖະມົນຕີ.

**ມາດຕາ 6. ພາລະບົດບາດ ແລະ ໜ້າທີ່**

ມອບໃຫ້ປະທານອົງການທ່ອງທ່ຽວແຫ່ງຊາດຄົ້ນຄ້ວາກຳນົດກ່ຽວກັບພາລະບົດບາດ, ຂອບເຂດສິດ, ໜ້າທີ່ ແລະ ໂຄງປະກອບການຈັດຕັ້ງຂອງກົມ, ຫ້ອງການທ່ອງທ່ຽວປະຈຳແຂວງ, ນະຄອນ, ເຂດພິເສດ, ໜ່ວຍງານທ່ອງທ່ຽວປະຈຳເມືອງ ແລະ ຜູ້ຕາງໜ້າຢູ່ຕ່າງປະເທດເປັນອັນລະອຽດ.

## ໝວດທີ IV
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 7. ຫຼັກການ ແລະ ວິທີການ**

ອົງການທ່ອງທ່ຽວແຫ່ງຊາດ ເຄື່ອນໄຫວວຽກງານຕາມຫຼັກການດັ່ງລຸ່ມນີ້:

7.1 ລວມສູນປະຊາທິປະໄຕ ປະສານສົມທົບລະບອບຫົວໜ້າດຽວ, ນຳພາເປັນໝູ່ຄະນະ ແລະ ບຸກຄົນຮັບຜິດຊອບ;

7.2 ເຮັດວຽກໂດຍອີງໃສ່ຍຸດທະສາດ, ແຜນການ 05 ປີ, ປະຈໍາປີ, 06 ເດືອນ, ງວດ ແລະ ປະຈໍາເດືອນ; ມີການພົວພັນປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ; ມີການສະຫຼຸບຖອດຖອນບົດຮຽນ ເພື່ອປັບປຸງວຽກງານໃຫ້ດີຍິ່ງຂຶ້ນ;

7.3 ປະຕິບັດລະບອບປະຊຸມ, ລາຍງານສ່ອງແສງປະຈໍາອາທິດ, 01 ເດືອນ, 03 ເດືອນ , 06 ເດືອນ ແລະ ປະຈໍາປີຢ່າງເປັນປົກກະຕິ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 8. ງົບປະມານ ແລະ ຕາປະທັບ**

ອົງການທ່ອງທ່ຽວແຫ່ງຊາດເປັນຫົວໜ່ວຍງົບປະມານຂັ້ນໜຶ່ງ ແລະ ມີຕາປະທັບຂອງຕົນ ເພື່ອນໍາໃຊ້ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 9. ເຄື່ອງໝາຍ**

ອົງການທ່ອງທ່ຽວແຫ່ງຊາດມີເຄື່ອງໝາຍສະເພາະ ຊຶ່ງເປັນສັນຍາລັກ ຂອງ ການທ່ອງທ່ຽວລາວ.

**ມາດຕາ 10. ການຈັດຕັ້ງປະຕິບັດ**

ອົງການທ່ອງທ່ຽວແຫ່ງຊາດ, ສໍານັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 11. ຜົນສັກສິດ**

ດໍາລັດສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດໍາລັດ ສະບັບເລກທີ່ 100/ນຍ, ລົງວັນທີ່ 23/12/92.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ ລາວ**

ບຸນຍັງ ວໍລະຈິດ